ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----====000====------

ກະຊວງການເງິນ
ກົມພາສີ

ເລກທີ: 02539 /ກພສ
ນະຄອນຫຼວງວຽງຈັນ, ວັນທີ: 21 MAY 2018

# ບົດແນະນຳ

## ວ່າດ້ວຍການຄຸ້ມຄອງການນຳໃຊ້ບັດອະນຸຍາດແຈ້ງພາສີ ຜ່ານລະບົບການແຈ້ງພາສີເປັນລາຍລະອຽດແບບອັດຕະໂນມັດ (ASYCUDA)

- ອີງຕາມ ກົດໝາຍພາສີສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງບາງມາດຕາ, ສະບັບເລກທີ: 057/ສພຊ, ລົງວັນທີ: 24 ທັນວາ 2014;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ: 2826/ກງ, ລົງວັນທີ: 22 ສິງຫາ 2017, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ;
- ອີງຕາມ ບົດແນະນຳຂອງກົມພາສີ ກ່ຽວກັບການແຈ້ງພາສີເປັນລາຍລະອຽດ ດ້ວຍລະບົບເອເລັກໂຕນິກ, ສະບັບເລກທີ: 00097/ກພສ, ລົງວັນທີ: 06 ມັງກອນ 2017;
- ອີງຕາມການເຫັນດີເປັນເອກະພາບຂອງຄະນະກົມພາສີ.

## ຫົວໜ້າກົມພາສີ ອອກບົດແນະນຳ ຄື:

**ມາດຕາ 1: ຈຸດປະສົງ**

ບົດແນະນຳສະບັບນີ້ ເພື່ອກຳນົດລະບຽບຫຼັກການ, ເງື່ອນໄຂການອອກບັດອະນຸຍາດແຈ້ງພາສີ ແລະ ມາດຕະການຄຸ້ມຄອງການນຳໃຊ້ລະບົບ ASYCUDA ໃຫ້ແກ່ **ຜູ້ແຈ້ງພາສີ** ກໍຄືບຸກຄົນ, ນິຕິບຸກຄົນ, ບໍລິສັດ, ອົງການຈັດຕັ້ງພາກລັດ ແລະ ສາກົນ ທີ່ດຳເນີນການແຈ້ງພາສີເປັນລາຍລະອຽດຜ່ານລະບົບ ASYCUDA ຢູ່ບັນດາດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ ແນໃສ່ເພື່ອກວດກາ ແລະ ຢັ້ງຢືນຄືນຄວາມຖືກຕ້ອງຂອງຜູ້ແຈ້ງພາສີ ໃຫ້ສອດຄ່ອງກັບລະບຽບກົດໝາຍ ແລະ ເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 2: ຂອບເຂດສິດນຳໃຊ້ບັດອະນຸຍາດແຈ້ງພາສີ**

ນຳໃຊ້ເພື່ອຢັ້ງຢືນຖານະຂອງຜູ້ແຈ້ງພາສີທີ່ໄດ້ຮັບອະນຸຍາດ ຊຶ່ງຈະຕ້ອງໄດ້ສະແດງບັດດັ່ງກ່າວຕໍ່ເຈົ້າໜ້າທີ່ພາສີຜູ້ຮັບເອກະສານ ເພື່ອກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຜູ້ນຳໃຊ້ ໃນເວລາດຳເນີນການແຈ້ງພາສີເປັນລາຍລະອຽດ ຜ່ານລະບົບ ASYCUDA ຢູ່ບັນດາດ່ານພາສີ ຊາຍແດນໃນຂອບເຂດທົ່ວປະເທດ.

**ມາດຕາ 3: ເງື່ອນໄຂໃນການອອກບັດອະນຸຍາດແຈ້ງພາສີ**

ຜູ້ແຈ້ງພາສີ ທີ່ສະເໜີຂໍອອກບັດອະນຸຍາດແຈ້ງພາສີ ຈະຕ້ອງປະກອບມີບັນດາເງື່ອນໄຂ ຄື:

- ຕ້ອງເປັນບໍລິສັດ, ອົງການຈັດຕັ້ງພາກລັດ ຫຼື ສາກົນ ທີ່ໄດ້ຮັບ ອະນຸຍາດໃນການດໍາເນີນການສົ່ງອອກ-ນໍາເຂົ້າ ສິນຄ້າ, ເຄື່ອງຂອງ ຖືກຕ້ອງຕາມລະບຽບການ;
- ຕ້ອງມີເອກະສານຢັ້ງຢືນຈາກບໍລິສັດ, ອົງການຈັດຕັ້ງພາກລັດ ຫຼື ສາກົນ, ຄັດຕິດເປັນເອກະສານປະກອບໃນການສະເໜີ;
- ຕ້ອງໄດ້ຜ່ານການຝຶກອົບຮົມການນໍາໃຊ້ລະບົບ ASYCUDA ແລະ ໄດ້ຮັບການຢັ້ງຢືນຈາກກົມພາສີ;
- ຕ້ອງແມ່ນສັນຊາດລາວ ແລະ ອາຍຸ 18 ປີ ຂຶ້ນໄປ, ມີໃບແຈ້ງໂທດ ແລະ ບໍ່ເຄີຍມີຄະດີທາງພາສີ.

**ມາດຕາ 4: ຂັ້ນຕອນໃນການອອກບັດອະນຸຍາດແຈ້ງພາສີ**

ຜູ້ແຈ້ງພາສີ ທີ່ມີຈຸດປະສົງສະເໜີອອກບັດອະນຸຍາດແຈ້ງພາສີ ຕ້ອງປະກອບເອກະສານສະເໜີ ຄື:

4.1. ກໍລະນີສະເໜີ ໃນນາມບໍລິສັດ ແມ່ນໃຫ້ນໍາສົ່ງເອກະສານປະກອບຕ່າງໆ ໃຫ້ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈໍາແຂວງ ເພື່ອສັງລວມ ແລະ ນໍາສະເໜີໃຫ້ກົມພາສີ ພິຈາລະນາອອກເລກລະຫັດ User, ເຊິ່ງເອກະສານປະກອບຕ່າງໆ ປະກອບມີ:

- ໃບສະເໜີ;
- ໃບທະບຽນວິສາຫະກິດ;
- ໃບອະນຸຍາດເປັນຜູ້ບໍລິການແຈ້ງພາສີ ຈາກກົມພາສີ ຫຼື ກະຊວງການເງິນ (ຖ້າມີ);
- ໃບຢັ້ງຢືນຈາກບໍລິສັດ;
- ໃບຢັ້ງຢືນຜ່ານການຝຶກອົບຮົມຈາກກົມພາສີ;
- ໃບຢັ້ງຢືນທີ່ຢູ່ ແລະ ສໍາເນົາບັດປະຈໍາຕົວ;
- ໃບແຈ້ງໂທດ;
- ຮູບຖ່າຍ ບໍ່ເກີນ 3 ເດືອນ ຂະໜາດ 3 x 4 ຈໍານວນ 2 ໃບ.

4.2. ກໍລະນີສະເໜີ ໃນນາມອົງການຈັດຕັ້ງພາກລັດ ຫຼື ສາກົນ ໃຫ້ນໍາສົ່ງເອກະສານປະກອບຕ່າງໆ ໃຫ້ພະແນກແຜນການ ແລະ ຂໍ້ມູນຂ່າວສານ (ກົມພາສີ) ເພື່ອນໍາສະເໜີໃຫ້ກົມພາສີ ພິຈາລະນາອອກບັດ, ເອກະສານປະກອບຕ່າງໆ ປະກອບມີ:

- ໃບສະເໜີ;
- ໃບຢັ້ງຢືນຂອງກົມກອງ ຫຼື ຫ້ອງການ;
- ໃບຢັ້ງຢືນທີ່ຢູ່ ແລະ ສໍາເນົາບັດປະຈໍາຕົວ;
- ໃບຢັ້ງຢືນຜ່ານການຝຶກອົບຮົມຈາກກົມພາສີ;
- ຮູບຖ່າຍ ບໍ່ເກີນ 3 ເດືອນ ຂະໜາດ 3 x 4 ຈໍານວນ 2 ໃບ.

4.3. ຄ່າທໍານຽມ ໃນການອອກບັດອະນຸຍາດແຈ້ງພາສີ ແມ່ນ 100,000 ກີບ/ບັດ.

**ມາດຕາ 5: ຮູບແບບບັດອະນຸຍາດແຈ້ງພາສີ**

- ດ້ານໜ້າປະກອບມີ: ເລກທີ; Logo ຂອງກົມພາສີ; ຮູບຖ່າຍເຈົ້າຂອງບັດ; ຊື່ ແລະ ນາມສະກຸນ; ເລກທະບຽນ; ບໍລິສັດ ຫຼື ອົງການຈັດຕັ້ງຕ່າງໆ ທີ່ສັງກັດ; ລະຫັດເຂົ້າລະບົບ; ວັນທີ່ອອກບັດ ແລະ ວັນໝົດອາຍຸ; ປະເພດຜູ້ແຈ້ງພາສີ (A ຜູ້ບໍລິການແຈ້ງພາສີ, B ຜູ້ແຈ້ງພາສີໃຫ້ແກ່ບໍລິສັດ ຂອງຕົນເອງ, C ຜູ້ແຈ້ງພາສີ ໃນນາມອົງການຈັດຕັ້ງພາກລັດ ຫຼື ສາກົນ); QR Code ທີ່ສາມາດສະແດງ ຂໍ້ມູນຕ່າງໆ ເຊັ່ນ: ເລກທີ, ລະຫັດ User ID, ຊື່ ແລະ ນາມສະກຸນ, ເລກທະບຽນ, ວັນທີອອກບັດ, ວັນໝົດອາຍຸ ແລະ ປະເພດຜູ້ແຈ້ງ; ແລະ ລາຍເຊັນ ພ້ອມປະທັບຕາ ຫົວໜ້າພະແນກແຜນການ ແລະ ຂໍ້ມູນຂ່າວສານ, ກອງຄຸ້ມຄອງພາສີ ແລະ ກອງກວດກາພາສີປະຈໍາແຂວງ.

- ດ້ານຫຼັງປະກອບມີຄຳແນະນຳ.

**ມາດຕາ 6: ການກຳນົດເວລານຳໃຊ້ ແລະ ການຕໍ່ອາຍຸການນຳໃຊ້ບັດອະນຸຍາດແຈ້ງພາສີ**

ອາຍຸການນຳໃຊ້ບັດ ແມ່ນ 1 ປີ ພາຍຫຼັງທີ່ໄດ້ຮັບການອະນຸມັດຈາກກົມພາສີ. ຜູ້ປະກອບການ ທີ່ໄດ້ຮັບອະນຸຍາດນຳໃຊ້ບັດ ສາມາດຕໍ່ອາຍຸການນຳໃຊ້ບັດໄດ້ ແຕ່ຕ້ອງໄດ້ມາພົວພັນກັບກອງຄຸ້ມຄອງພາສີ ບ່ອນທີ່ອອກບັດ ກ່ອນວັນໝົດອາຍຸ 1 ເດືອນ, ເພື່ອກວດກາປະຫວັດການເຄື່ອນໄຫວ ກ່ອນຈະໄດ້ຮັບການອະນຸມັດຕໍ່ອາຍຸ.

**ມາດຕາ 7: ວ່າດ້ວຍຂໍ້ຫ້າມ**

ຜູ້ແຈ້ງພາສີ ທີ່ໄດ້ຮັບອະນຸຍາດນຳໃຊ້ບັດ ສາມາດນຳໃຊ້ບັດພົວພັນວຽກງານ ເຂົ້າໃນການແຈ້ງພາສີເປັນລາຍລະອຽດ ທີ່ຕິດພັນກັບການສົ່ງອອກ-ນຳເຂົ້າ ສິນຄ້າ, ເຄື່ອງຂອງ ຂອງບໍລິສັດ ຫຼື ອົງການຈັດຕັ້ງຂອງຕົນເທົ່ານັ້ນ. ຫ້າມບໍ່ໃຫ້ບຸກຄົນອື່ນນຳໃຊ້ບັດພົວພັນວຽກງານ ຫຼື ລະຫັດ User ຂອງຕົນເອງ ຢ່າງເດັດຂາດ. ຫ້າມບໍ່ໃຫ້ນຳໃຊ້ບັດພົວພັນວຽກງານ ກັບວຽກງານອື່ນໆ ທີ່ບໍ່ຕິດພັນກັບການແຈ້ງພາສີ ເປັນລາຍລະອຽດ.

**ມາດຕາ 8: ມາດຕະການຕໍ່ຜູ້ລະເມີດ**

ຜູ້ແຈ້ງພາສີ ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ບັດ ເຂົ້າໃນການແຈ້ງພາສີເປັນລາຍລະອຽດແບບອີເລັກໂທຣນິກ ທີ່ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນຂໍ້ກຳນົດສະບັບນີ້ ຈະຖືກປະຕິບັດມາດຕະການ ຕາມລຳດັບ ຄື: ກ່າວເຕືອນ, ໂຈະການນຳໃຊ້ຊົ່ວຄາວ ແລະ ຍົກເລີກການນຳໃຊ້ຖາວອນ.

- ກໍລະນີທີ່ມີການກະທຳຜິດທາງພາສີໃນທຸກຮູບແບບຈະຖືກດຳເນີນຄະດີທາງພາສີຕາມແຕ່ລະກໍລະນີ;
- ກໍລະນີເປັນການກະທຳຜິດທີ່ສົ່ງຜົນກະທົບທາງແພ່ງ ຫຼື ທາງອາຍາ ຈະຕ້ອງຊົດໃຊ້ຄ່າເສຍຫາຍ ແລະ ຖືກດຳເນີນຄະດີຕາມກົດໝາຍ;
- ກໍລະນີການຍົກເລີກການນຳໃຊ້ບັດ ປະກອບມີ: ຜູ້ແຈ້ງພາສີ ກະທຳຜິດທາງພາສີ, ບັດຕົກເຮຍເສຍຫາຍ, ບັດທີ່ບໍ່ມີການເຄື່ອນໄຫວ ຫຼື ບໍ່ມີການນຳໃຊ້ ເກີນ 6 ເດືອນຂຶ້ນໄປ.

**ມາດຕາ 9: ການຈັດຕັ້ງປະຕິບັດ**

ມອບບັນດາພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ, ດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ ເອົາໃຈໃສ່ເຜີຍແຜ່ບົດແນະນຳສະບັບນີ້ ໃຫ້ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງພາກລັດ ຫຼື ສາກົນ ຈົ່ງຮັບຮູ້ຕໍ່ກັບລະບຽບຫຼັກການ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດ ໄດ້ຢ່າງມີປະສິດທິຜົນ.

**ມາດຕາ 10: ຜົນສັກສິດ**

ບົດແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຮັກສາການຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ

<u>ບ່ອນນຳສົ່ງ:</u>

- ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ 1 ສະບັບ ເພື່ອຊາບ;
- ຫ້ອງການກະຊວງການເງິນ 1 ສະບັບ ເພື່ອຊາບ;
- ສະພາອຸດສະຫະກຳການຄ້າ 1 ສະບັບ ເພື່ອຊາບ ແລະ ປະສານສົມທົບ;
- ພະແນກການກົມພາສີ ພະແນກລະ 1 ສະບັບ ເພື່ອຊາບ;
- ກອງຄຸ້ມຄອງພາສີ I – VII ບ່ອນລະ 1 ສະບັບ ເພື່ອຊາບ.

**ຕົວຢ່າງດ້ານໜ້າ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ: 0001 / ກຄພສ 1

## ບັດອະນຸຍາດແຈ້ງພາສີ

| ຮູບຖ່າຍ<br>ຂະໜາດ 3 X 4 | | |
|---|---|---|
| | - ຊື່ ແລະ ນາມສະກຸນ | : ທ້າວ ພອນໄຊ ກິ່ງສອນ |
| | - ລະຫັດ ID | : phonexay_ko |
| | - ສັງກັດ | : ບໍລິສັດ ພອນໄຊ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ |
| | - ທະບຽນອາກອນ (TIN) | : 000000015 |
| | - ວັນທີອອກບັດ | : 01/01/2018 |
| | - ວັນທີໝົດອາຍຸ | : 31/12/2018 |
| | - ປະເພດການແຈ້ງ | : A |

**ຫົວໜ້າກົມພາສີ**

**ຕົວຢ່າງດ້ານຫຼັງ**

## ຄຳແນະນຳ

- ບັດນີ້ແມ່ນນຳໃຊ້ສຳລັບຢັ້ງຢືນ ໃນການແຈ້ງພາສີເປັນລາຍລະອຽດ ຂອງບໍລິສັດ, ອົງການຈັດຕັ້ງພາກລັດ ຫຼື ສາກົນ.
- ຫ້າມບໍ່ໃຫ້ນຳໃຊ້ບັດພົວພັນວຽກງານ ກັບວຽກງານອື່ນໆ ທີ່ບໍ່ຕິດພັນກັບການແຈ້ງພາສີ ເປັນລາຍລະອຽດ.
- ຫ້າມບໍ່ໃຫ້ປອມແປງ ຫຼື ດັດແກ້ບັດອະນຸຍາດແຈ້ງພາສີ.
- ກໍລະນີ ທີ່ບັດເສຍຫາຍ ຫຼື ເປ່ເພ ຈະຕ້ອງ ໄດ້ຕິດຕໍ່ພົວພັນຫາກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ.
- ກໍລະນີເຈົ້າຂອງບັດບໍ່ໄດ້ມີການເຄື່ອນໄຫວ, ສັງກັດຢູ່ບໍລິສັດ, ອົງການຈັດຕັ້ງພາກລັດ ຫຼື ສາກົນ ຈະຕ້ອງແຈ້ງໃຫ້ກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຂວງ ຮັບຊາບ.